

# ການຂູດຮີດທາງເພດ

ນິຍາມ

## ການຂູດຮີດທາງເພດ

ການຂູດຮີດທາງເພດແມ່ນຂະບວນການທີ່ບຸກຄົນໃດໜຶ່ງຖືກບັງຄັບໃຫ້ສະໜອງຄວາມຕ້ອງການທາງເພດ, ເງິນ ແລະ ສິ່ງຂອງອື່ນໆ ຫຼື ຜະລິດສິ່ງຕ່າງໆທີ່ສື່ທາງເພດ.

ການຂູດຮີດທາງເພດໝາຍເຖິງຄວາມບໍ່ສົມດູນດ້ານອຳນາດລະຫວ່າງຜູ້ກະທຳການຂູດຮີດທາງເພດ ແລະ ຜູ້ຖືກເຄາະຮ້າຍທີ່ພາໃຫ້ຜູ້ກະທຳການຂູດຮີດທາງເພດສາມາດບີບບັງຄັບ ຫຼື ເຮັດໃຫ້ຜູ້ຖືກເຄາະຮ້າຍຝືນໃຈຍອມປະຕິບັດຕາມຄວາມຕ້ອງການທາງເພດ ຫຼື ທາງການເງິນ.



## ຂອບກົດໝາຍ

ການຂູດຮີດທາງເພດບໍ່ໄດ້ກຳນົດຢ່າງຈະແຈ້ງໃນລະບຽບກົດໝາຍທີ່ກ່ຽວຂ້ອງຂອງພາກພື້ນ ຫຼື ສາກົນວ່າການກົດຂີ່ຂູດຮີດທາງເພດເດັກເປັນການກະທຳຜິດທາງອາຍາ.

ເຖິງຢ່າງໃດກໍ່ຕາມ, <u>ສົນທິສັນຍາລານຊາລອທ໌</u>ໄດ້ກຳນົດວ່າການກະທຳທີ່ເຮັດໃຫ້ເດັກ ແລະ ການບີບບັງຄັບເດັກໃຫ້ມີສ່ວນຮ່ວມໃນການກະທຳທີ່ເປັນສິ່ງລາມົກອະນາຈານເປັນການກະທຳຜິດທາງອາຍາ (ມາດຕາ 21(1)(ກ-ຂ)). ເຊັ່ນດຽວກັບການກະທຳທີ່ເປັນການລໍ້ລວງໃຫ້ເດັກສ້າງສື່ລາມົກອະນາຈານເດັກ (ມາດຕາ 23). ນອກນັ້ນ, ການມີສ່ວນຮ່ວມໃນກິດຈະກຳທາງເພດກັບເດັກຍັງເປັນການກະທຳຜິດທາງອາຍາ, ຖ້າຫາກມີການບີບບັງຄັບ, ໃຊ້ກຳລັງບັງຄັບ ຫຼື ຂົ່ມຂູ່; ເມື່ອບຸກຄົນໃດໜຶ່ງສວຍໃຊ້ຄວາມເຊື່ອຖື, ອຳນາດ ຫຼື ອິດທິພົນຕໍ່ເດັກ ຫຼື ໂດຍສະເພາະເມື່ອເດັກຕົກໃນສະຖານະພາບທີ່ອ່ອນແອ ແລະ ມີຄວາມສ່ຽງ.

ອາດຈະຖືໄດ້ວ່າບັນດາມາດຕາດັ່ງກ່າວກວມເຖິງອົງປະກອບຂອງການຂູດຮີດທາງເພດ.

ນອກນັ້ນແລ້ວ, ບັນດາສົນທິສັນຍາທີ່ກຳນົດວ່າການຜະລິດ, ການຈັດຫາ, ການແຈກຢາຍ ຫຼື ການສະເໜີສື່ລາມົກອະນາຈານເດັກເປັນ ການກະທຳຜິດທາງອາຍາ - <u>ເປັນຕົ້ນແມ່ນສົນທິສັນຍາບູດາເປສ໌, ສົນທິສັນຍາລານຊາລອທ໌, ອະນຸສັນຍາເພີ້ມເຕີມຂອງສົນທິສັນຍາວ່າດ້ວຍສິດທິເດັກ ກ່ຽວກັບ ການຄ້າເດັກ, ການຄ້າປະເວນີເດັກ ແລະ ສິ່ງລາມົກອານາຈານທີ່ກ່ຽວກັບເດັກ, ສົນທິສັນຍາສະຫະພາບອາຟຣິກາວ່າດ້ວຍອາດຊະຍາກຳທາງຄອມພິວເຕີ</u> - ປະກອບດ້ວຍຄຳສັບທີ່ອາດຈະກວມເຖິງອົງປະກອບຂອງການຂູດຮີດທາງເພດ.

## ຜູ້ລະເມີດ ແລະ ຄຸນລັກສະນະຂອງການຂູດຮີດທາງເພດ

- ຜູ້ກະທຳການຂູດຮີດທາງເພດສ່ວນໃຫຍ່ແມ່ນອີງໃສ່ອຳນາດຕຳແໜ່ງ ຫຼື **ຄວາມບໍ່ສົມດຸນທາງດ້ານອຳນາດ** ຫຼາຍກວ່າການໃຊ້ຄວາມຮຸນແຮງທາງຮ່າງກາຍ ຫຼື ບີບບັງຄັບເດັກໃຫ້ສະໜອງຄວາມຕ້ອງການທາງເພດ ຫຼື ເງິນ ຫຼື ສິ່ງຂອງຕ່າງໆ;
- ການບີບບັງຄັບທາງດ້ານຈິດໃຈໂດຍທົ່ວໄປຈະເປັນໄພຂົ່ມຂູ່ທີ່ເກີດຂຶ້ນຈາກ **ການລະງັບຜົນປະໂຫຍດສະເພາະໃດໜຶ່ງ ຫຼື ເກີດຂຶ້ນຈາກບໍ່ໄດ້ຮັບໝາກຜົນທີ່ເພິ່ງພໍໃຈ**ຖ້າບໍ່ສາມາດຕອບສະໜອງຄວາມຕ້ອງການໄດ້;
- ອົງປະກອບທາງເພດອາດຈະປະກອບດ້ວຍ**ຄວາມຕ້ອງການຂອງຜູ້ກະທຳການຂູດຮີດທາງເພດ**ໃນກິດຈະກຳທາງເພດທຸກຮູບແບບທີ່ຝືນໃຈຜູ້ຖືກເຄາະຮ້າຍ, ເປັນຕົ້ນແມ່ນການເປີດເຜີຍສ່ວນສະຫງວນຂອງຮ່າງກາຍ, ການຖ່າຍຮູບໂປ້ ຫຼື ການຍອມໃຫ້ທາລຸນທາງຮ່າງກາຍ;
- ອົງປະກອບທາງເພດຍັງສະທ້ອນໃຫ້ເຫັນໃນວິທີການທີ່ນຳໃຊ້ເພື່ອໃຫ້ໄດ້ສິ່ງຂອງທີ່ຕ້ອງການ, **ການບໍລິການ ຫຼື ເງິນ**. ຕົວຢ່າງຜູ້ກະທຳການຂູດຮີດສາມາດເຂົ້າເຖິງເນື້ອໃນທີ່ມີລັກສະນະທາງເພດທີ່ຜູ້ຖືກເຄາະຮ້າຍສ້າງຂຶ້ນເອງ* ແລະ ນຳໃຊ້ເນື້ອໃນດັ່ງກ່າວເພື່ອຂູ່ເອົາເງິນ ໂດຍອ້າງວ່າຈະເຜີຍຄວາມລັບດັ່ງກ່າວ;
- ການກົດຂີ່ຂູດຮີດທາງເພດອາດພົວພັນກັບ (ການຂົ່ມຂູ່) ການເຜີຍແຜ່ຮູບພາບລາມົກອະນາຈານໃນອິນເຕີເນັດ ຫຼື ສົ່ງໃຫ້ໝູ່ເພື່ອນ. ສິ່ງເຫຼົ່ານີ້ຍັງສົ່ງ**ຜົນບໍ່ດີກັບຄືນຫາຜູ້ສົ່ງໄດ້** ເປັນຕົ້ນແມ່ນການກໍ່ກວນໃນອິນເຕີເນັດ ເຊິ່ງຈະເຮັດໃຫ້ຜູ້ຖືກເຄາະຮ້າຍທີ່ເປັນເດັກໄດ້ຮັບຜົນກະທົບເພີ່ມເຕີມ ຫຼື ເປັນອັນຕະລາຍໄດ້.

**ກະລຸນາເບິ່ງເອກະສານຂໍ້ມູນຕົວຈິງ - “ການສົ່ງຂໍ້ຄວາມທີ່ມີລັກສະນະທາງເພດ”*

## ທ່ານສາມາດເຮັດຫຍັງໄດ້ແນ່?

- ຈົ່ງສົ່ງເສີມໃຫ້ມີຂອບກົດໝາຍທີ່ເຂັ້ມແຂງຂຶ້ນ ຊຶ່ງກຳນົດສະເພາະກ່ຽວກັບການຂູດຮີດທາງເພດວ່າເປັນການກະທຳຜິດທາງອາຍາ;
- ຈົ່ງສົ່ງເສີມໃຫ້ມີແຫຼ່ງຊັບພະຍາກອນທີ່ດີຂຶ້ນສຳລັບການບັງຄັບໃຊ້ກົດໝາຍເພື່ອຮັບມືກັບການຂູດຮີດທາງເພດ;
- ຈົ່ງສົ່ງເສີມ ແລະ ຮ່ວມມືກັບຜູ້ໃຫ້ບໍລິການອິນເຕີເນັດເພື່ອຈຳກັດການຈາລາຈອນຂອງເນື້ອໃນທີ່ມີລັກສະນະທາລຸນທາງເພດເດັກໃນອິນເຕີເນັດ, ຈຳກັດໂອກາດຂອງຜູ້ກະທຳການກົດຂີ່ຂູດຮີດທາງເພດເດັກ;
- ຈົ່ງສຶກສາອົບຮົມ ແລະ ປູກຈິດສຳນຶກໃຫ້ແກ່ເດັກ, ພໍ່ແມ່ ແລະ ຜູ້ເບິ່ງແຍງລ້ຽງດູເດັກກ່ຽວກັບຄວາມສ່ຽງ ແລະ ຜົນກະທົບທີ່ອາດຈະເກີດຂຶ້ນຈາກການສົ່ງຂໍ້ຄວາມທີ່ມີລັກສະນະທາງເພດ;
- ຈົ່ງລາຍງານເມື່ອພົບເຫັນ “ຂໍ້ຄວາມທີ່ມີລັກສະນະທາງເພດ” ຫຼື ສິ່ງທີ່ສື່ເຖິງທາງເພດເດັກໃນອິນເຕີເນັດ.

ເອກະສານຂໍ້ມູນຕົວຈິງທີ່ຊີ້ໃຫ້ເຫັນກ່ຽວກັບການຂູດຮີດທາງເພດເດັກທາງອິນເຕີເນັດ ສະບັບນີ້ໄດ້ຮັບການພັດທະນາໂດຍອົງການ ECPAT ສາກົນ.
ສະໜັບສະໜູນການແປພາສາ ແລະ ການຜະລິດໂດຍອົງການສປຊ ສຳລັບເດັກ